## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ສໍານັກງານນາຍົກລັດຖະມົນຕີ** **ເລກທີ 132 /ນຍ**

ນະຄອນຫລວງວຽງຈັນ, ວັນທີ 10 ພຶດສະພາ 2005

# ດຳລັດ
## ວ່າດ້ວຍດັດສະນີເງິນເດືອນພື້ນຖານຂອງລັດຖະກອນ

- ອີງຕາມກົດຫມາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມດຳລັດ ຂອງ ທ່ານນາຍົກລັດຖະມົນຕີ ສະບັບເລກທີ 82/ນຍ, ລົງວັນທີ 19 ພຶດສະພາ 2003 ວ່າດ້ວຍ ລະບຽບລັດຖະກອນແຫ່ງ ສປປ ລາວ.
- ອີງຕາມດຳລັດ ຂອງ ທ່ານນາຍົກລັດຖະມົນຕີ ສະບັບເລກທີ 157/ນຍ, ລົງວັນທີ 06 ຕຸລາ 2004 ວ່າດ້ວຍ ການປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2004-2005.

## ນາຍົກລັດຖະມົນຕີອອກດຳລັດ:

<u>ມາດຕາ 1</u>: ຫລັກການ.

ຄຳນຶງເຖິງການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ເພື່ອໃຫ້ງົບປະມານສາມາດຕອບສະຫນອງໄດ້;

ເພີ່ມເງິນເດືອນພື້ນຖານຂອງລັດຖະກອນຂຶ້ນ ບົນພື້ນຖານການເພີ່ມມູນຄ່າດັດສະນີເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຮັບປະກັນຍົກລະດັບຊີວິດການເປັນຢູ່ຂອງລັດຖະກອນໃຫ້ດີຂຶ້ນ.

<u>ມາດຕາ 2</u>: ຜົນປະໂຫຍດຂອງການກຳນົດດັດສະນີ.

ເມື່ອຕົກລົງຮັບຮອງເອົາດັດສະນີແລ້ວ ຈະມີຄວາມສະດວກໃນການຄິດໄລ່, ພຽງ

ແຕ່ເອົາມູນຄ່າດັດສະນີຄູນໃສ່ດັດສະນີເງິນເດືອນພື້ນຖານຂອງລັດຖະກອນ ແລະ ເງິນເດືອນພື້ນຖານຂອງລັດຖະກອນແຕ່ລະຄົນຈະເພີ່ມຂຶ້ນຕາມຊັ້ນ-ຂັ້ນຂອງຕົນເອງ.

<u>ມາດຕາ 3</u>: ກຳນົດດັດສະນີເງິນເດືອນພື້ນຖານຂອງລັດຖະກອນຕາມຊັ້ນ-ຂັ້ນເງິນເດືອນ.

ຊັ້ນລັດຖະກອນ ສປປລາວ ປະກອບດ້ວຍ 5 ຊັ້ນ ແຕ່ຊັ້ນ I ຫາ ຊັ້ນ V , ແຕ່ລະຊັ້ນ ມີ 15 ຂັ້ນ. ແຕ່ລະຂັ້ນປະກອບດ້ວຍດັດສະນີດັ່ງນີ້:

| ຂັ້ນ ເງິນເດືອນ | ຈຳນວນດັດສະນີ | | | | |
|---|---|---|---|---|---|
| | ຊັ້ນ I | ຊັ້ນ II | ຊັ້ນ III | ຊັ້ນ IV | ຊັ້ນ V |
| 15 | 165 | 205 | 261 | 333 | 421 |
| 14 | 162 | 200 | 254 | 324 | 410 |
| 13 | 159 | 195 | 247 | 315 | 399 |
| 12 | 156 | 190 | 240 | 306 | 388 |
| 11 | 153 | 185 | 233 | 297 | 377 |
| 10 | 150 | 180 | 226 | 288 | 366 |
| 9 | 147 | 175 | 219 | 279 | 355 |
| 8 | 144 | 170 | 212 | 270 | 344 |
| 7 | 141 | 165 | 205 | 261 | 333 |
| 6 | 140 | 162 | 200 | 254 | 324 |
| 5 | 139 | 159 | 195 | 247 | 315 |
| 4 | 138 | 156 | 190 | 240 | 306 |
| 3 | 137 | 153 | 185 | 233 | 297 |
| 2 | 136 | 150 | 180 | 226 | 288 |
| 1 | 135 | 147 | 175 | 219 | 279 |

<u>ມາດຕາ 4</u>: ການເພີ່ມມູນຄ່າດັດສະນີເງິນເດືອນ.

ມູນຄ່າດັດສະນີເງິນເດືອນຂອງລັດຖະກອນເພີ່ມຂຶ້ນໂດຍສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງຊາດແຕ່ລະໄລຍະຕາມການຕົກລົງຂອງລັດຖະບານ ແລະ ການຮັບຮອງຂອງສະພາແຫ່ງຊາດ.

<u>ມາດຕາ 5</u>: ມອບໃຫ້ກະຊວງການເງິນຄິດໄລ່ເງິນເດືອນພື້ນຖານຂອງລັດຖະກອນ ຕາມຈຳນວນດັດສະນີທີ່ກຳນົດໃນ **ມາດຕາ 3** ຂອງດຳລັດສະບັບນີ້.

ມາດຕາ 6: ບັນດາກະຊວງ, ອົງການ, ນະຄອນຫລວງ, ແຂວງ ແລະ ເຂດພິເສດ ຈົ່ງຮັບຮູ້ ແລະ ປະຕິບັດຢ່າງເຂັ້ມງວດ.

ມາດຕາ 7: ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ